ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານແລະຢາ
ໂທ: 214013-14ແຟັກ: 214015

ເລກທີ 4546/17.ກອຢ

ນະຄອນຫລວງວຽງຈັນ,ວັນທີ 19 JUN 2017

## ແຈ້ງການ

ເຖິງ : **ທ່ານ ຫົວໜ້າອຳນວຍການໂຮງແຮມ, ຮ້ານອາຫານ, ສະຖານທີ່ຂາຍອາຫານບໍລິສັດສົ່ງອອກ-ນຳເຂົ້າ ແລະ ຫ້າງຮ້ານຂາຍຍົກຂາຍຍ່ອຍ, ໂຮງງານຜະລິດອາຫານ, ນ້ຳດື່ມ ແລະນ້ຳກ້ອນ ແລະພໍ່ແມ່ປະຊາຊົນ,**

ເລື່ອງ: ການປະຕິບັດຄວາມສະອາດແລະປອດໄພໃນການຜະລິດຈຳໜ່າຍ ແລະບໍລິການອາຫານ ແລະການເລືອກບໍລິໂພກອາຫານ

- ອີງຕາມ: ຂໍ້ການຊີ້ນຳຂອງທ່ານ ລັດຖະມົນຕີກະຊວງສາທາລະນະສຸກໃນການຕອບໂຕ້ແລະເຝົ້າລະວັງພະຍາດໄຂ້ເຫຼືອງທີ່ໄດ້ເກີດຂື້ນໃນມລຍະນີ້

ກົມອາຫານແລະຢາ, ກະຊວງສາທາລະນະສຸກຂໍແຈ້ງມາຍັງທ່ານ ເພື່ອປ້ອງກັນແລະສະກັດກັ້ນການລະບາດຂອງພະຍາດໄຂ້ເຫຼືອງທີ່ເກີດຂື້ນໃນປະຈຸບັນ ຈະຕ້ອງໄດ້ມີການເຂັ້ມງວດໃນການຮັກສາສຸຂະນາໄມໃນການຜະລິດ, ຈຳໜ່າຍ, ບໍລິການອາຫານປອດໄພໃຫ້ແກ່ປະຊາຊົນ ໂດຍສະເພາະການສຸຂະນາໄມຜູ້ຜະລິດອາຫານ ແລະ ບໍລິໂພກອາຫານ ແລະເຄື່ອງດື່ມສະອາດ ແລະ ສຸກດີ.ໃນນາມຜູ້ທີ່ໄດ້ຮັບການມອບໝາຍໃນການກວດກາຕິດຕາມການຜະລິດຈຳໜ່າຍແລະບໍລິການອາຫານ, ພວກຂ້າພະເຈົ້າ ຂໍແຈ້ງມາຍັງທ່ານ ບັນດາໂຮງແຮມ, ຮ້ານອາຫານ, ສະຖານທີ່ຂາຍອາຫານບໍລິສັດສົ່ງອອກ-ນຳເຂົ້າ ແລະຫ້າງຮ້ານຂາຍຍົກຂາຍຍ່ອຍ,ໂຮງງານຜະລິດອາຫານ, ນ້ຳດື່ມ ແລະນ້ຳກ້ອນທີ່ຢູ່ໃນເຂດນະຄອນຫຼວງວຽງຈັນ ຈົ່ງເອົາໃຈໃສ່ໃນການຮັບປະກັນຄຸນນະພາບແລະຄວາມປອດໄພຂອງອາຫານ ໂດຍການປະຕິບັດດັ່ງລຸ່ມນີ້:

1. ຮັກສາຄວາມສະອາດສະຖານທີ່ ຜະລິດ, ປຸງແຕ່ງ, ຈຳໜ່າຍ ແລະ ບໍລິການອາຫານ -ຮ້ານອາຫານຕ່າງໆ, ອາຫານທີ່ຂາຍຕາມແຄມທາງ

2. ຜະລິດອາຫານໃຫ້ຖືກສຸຂະລັກສະນະ,ເລືອກຊື້ວັດຖຸດິບທີ່ສະອາດປອດໄພ, ອາຫານທີ່ບໍ່ໝົດອາຍຸ ແລະ ໄດ້ຜ່ານການກວດກາຄຸນນະພາບແລ້ວ

3. ເຂັ້ມງວດໃນການຮັກສາອະນາໄມສ່ວນບຸກຄົນທີ່ຜະລິດ ແລະ ບໍລິການອາຫານ,ຖ້າມີອາຫານໄຂ້ແມ່ນບໍ່ໃຫ້ຜະລິດອາຫານ ແລະ ສົ່ງໄປປິ່ນປົວທັນທີ

4. ໃຊ້ນ້ຳແລະນ້ຳກ້ອນ ທີ່ສະອາດໃນການຜະລິດ, ຈຳໜ່າຍ ແລະ ບໍລິການອາຫານ,

5. ສຳລັບຜູ້ບໍລິໂພກແມ່ນໃຫ້ເອົາໃຈໃສ່ການບໍລິໂພກອາຫານສຸກດີ, ອາຫານຮ້ອນ ດື່ມແລະ ໃຊ້ນ້ຳທີ່ສະອາດ ຫຼື ຕົ້ມນ້ຳບໍລິໂພກຍິ່ງເປັນການດີ.

6. ເຈົ້າໜ້າທີ່ກວດກາອາຫານແລະຢາ ແລະສາທາລະນະສຸກຈະລົງເຜີຍແຜ່ແລະ ກວດກາຕິດຕາມສະຖານທີ່ຜະລິດ,ຈຳໜ່າຍ,ບໍລິການອາຫານດັ່ງກ່າວນີ້ ແລະຖ້າພົບການຜະລິດອາຫານອາຫານແລະເຄື່ອງດື່ມມີການປົນເປື້ອນ, ອາຫານໝົດອາຍຸ ຈະໄດ້ປະຕິບັດມາດຕະການຕາມຄວາມເໝາະສົມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດດ້ວຍ.

ຫົວໜ້າກົມອາຫານແລະຢາ

ດຣ.ສົມທະວີ ຈາງວິສົມມິດ